**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

-----------------------------

ແຂວງເຊກອງ

ເຈົ້າແຂວງ

ເລກທີ 128 /**ຈຂ.ຊກ**

**ເຊກອງ** ວັນທີ 04/05/2017

# ຂໍ້ຕົກລົງ

## ວ່າດ້ວຍ: ອະນຸມັດໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ປະຈຳແຂວງ ປະຕິບັດການຈັດເກັບ ແລະ ພິມໃບທະບຽນ, ໃບຂັບຂີ່ຖາວອນ ຢູ່ແຂວງເຊກອງ

- **ອີງຕາມ** ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ(ສະບັບປັບປຸງ) ສະບັບເລກທີ 68/**ສພຊ** ລົງວັນທີ 14 **ທັນວາ** 2015, ພາກທີ III, ໝວດທີ 4 ມາດຕາ 20 **ວ່າດວ້ຍ**: ສິດ ແລະ ໜ້າທີ່ ຂອງເຈົ້າແຂວງ ແລະ ເຈົ້າຄອງນະຄອນ.
- **ອີງຕາມ** ບົດລາຍງານ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ປະຈຳແຂວງ ສະບັບເລກທີ 1697/**ຍທຂ.ຊກ** ລົງວັນທີ 19 **ເມສາ** 2017.
- **ອີງຕາມ** ໃບສະເໜີ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ປະຈຳແຂວງ ສະບັບເລກທີ 1700/**ຍທຂ.ຊກ** ລົງວັນທີ 21 **ເມສາ** 2017.

## ເຈົ້າແຂວງຕົກລົງ:

**ມາດຕາ 01:** ເຫັນດີອະນຸມັດໃຫ້ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ຈັດຕັ້ງປະຕິບັດການຈັດເກັບ ແລະ ການພິມໃບທະບຽນ, ໃບຂັບຂີ່ຖາວອນ ຢູ່ແຂວງເຊກອງ ມີດັ່ງນີ້:

ກ. ໃບທະບຽນພາະນະ:

| ລ/ດ | ລາຍການ | ລາຄາ (ກີບ) |
|---|---|---|
| 01 | ໃບຄຳຮ້ອງ | 2,000 |
| 02 | ລາຍການກວດກາເຕັກນິກ | 2,000 |
| 03 | ບົດບັນທຶກກວດກາເອກະສານ (ໃບສີບົວ) | 5,000 |
| 04 | ປຶ້ມຕິດຕາມການຂຶ້ນທະບຽນ | 7,000 |
| 05 | ສະແຕັມກັນປອມ | 4,000 |
| 06 | ໃບທະບຽນຊົ່ວຄາວ | 4,000 |
| 07 | ສະຕິກເກີເຕັກນິກ | 17,000 |
| 08 | ໃບທະບຽນຖາວອນ | 106,000 |
| **ລວມລາຄາທັງໝົດ:** | | **147,000** |

ຂ. ໃບຂັບຂີ່ພາຫະນະ:

| ລ/ດ | ລາຍການ | ລາຄາ (ກີບ) |
|---|---|---|
| 01 | ໃບຄໍາຮ້ອງ | 2,000 |
| 02 | ປຶ້ມບັນທຶກກວດກາເອກະສານ (ໃບສີບົວ) | 5,000 |
| 03 | ສະແຕັມກັນປອມ | 4,000 |
| 04 | ໃບຂັບຂີ່ຊົ່ວຄາວ | 4,000 |
| 05 | ໃບຂັບຂີ່ຖາວອນ | 106,000 |
| **ລວມລາຄາທັງໝົດ:** | | **121,000** |

ມາດຕາ 02: ມອບໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ປະຈໍາແຂວງເຊກອງ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງກັບລະບຽບການທີ່ວາງອອກຢ່າງເຂັ້ມງວດ. ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ.

ມາດຕາ 03: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ-ແຂວງເຊກອງ:**

ຄໍາເພີຍ ບຸດດາວຽງ